ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສຳນັກງານນາຍົກລັດຖະມົນຕີ

ເລກທີ 51 /ນຍ

ນະຄອນຫລວງວຽງຈັນ, ວັນທີ 25 - 2 - 2011

# ດຳລັດ

## ວ່າດ້ວຍການຈັດຕັ້ງ ແລະການເຄື່ອນໄຫວ ຂອງສູນສະຖິຕິແຫ່ງຊາດ

- ອີງຕາມ ກົດໝາຍ ວ່າດ້ວຍລັດຖະບານ ແຫ່ງ ສ ປ ປ ລາວ ສະບັບເລກທີ 02/ສພຊ, ລົງວັນທີ 06 ພຶດສະພາ 2003;
- ອີງຕາມ ກົດໝາຍ ວ່າດ້ວຍສະຖິຕິ ສະບັບເລກທີ 03/ສພຊ, ລົງວັນທີ 30 ມິຖຸນາ 2010
- ອີງຕາມ ໜັງສືສະເໜີ ຂອງລັດຖະມົນຕີວ່າການກະຊວງແຜນການ ແລະ ການລົງທຶນ ສະບັບເລກທີ 2942/ຜທ.ສຖຕ1, ລົງວັນທີ 15 ທັນວາ 2010 ;
- ອີງຕາມ ໜັງສືສະເໜີ ຂອງທ່ານ ລັດຖະມົນຕີປະຈຳສຳນັກງານນາຍົກລັດຖະມົນຕີ, ຫົວໜ້າທະບວງການປົກຄອງ ແລະ ຄຸ້ມຄອງລັດຖະກອນ ສະບັບເລກທີ 20/ທປຄ ລົງວັນທີ 15 ກຸມພາ 2011.

## ນາຍົກລັດຖະມົນຕີ ແຫ່ງ ສ ປ ປ ລາວ ອອກດຳລັດ:

## ໝວດທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ດຳລັດສະບັບນີ້ວາງອອກເພື່ອກຳນົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ, ແບບແຜນວິທີເຮັດວຽກຂອງສູນສະຖິຕິແຫ່ງຊາດແນໃສ່ ເຮັດໃຫ້ການເຄື່ອນໄຫວວຽກງານມີຄວາມຄ່ອງຕົວ ແລະ ມີປະສິດທິຜົນສູງ.

ມາດຕາ 2. ທີ່ຕັ້ງ ແລະ ພາລະບົດບາດຂອງສູນສະຖິຕິແຫ່ງຊາດ

ສູນສະຖິຕິແຫ່ງຊາດ ຂຽນຫຍໍ້ "ສຖຕ" ຂຽນເປັນພາສາຕ່າງປະເທດ Lao Statistics Bureau "LSB" ມີຖານະທຽບເທົ່າທະບວງ ຂຶ້ນກັບກະຊວງແຜນການ ແລະ ການລົງທຶນ, ມີພາລະບົດບາດເປັນສູນກາງປະສານງານດ້ານວິຊາການສະຖິຕິ ໃນລະບົບສະຖິຕິແຫ່ງຊາດ (ສາຍຕັ້ງ ແລະ ສາຍຂວາງ) ແຕ່ສູນກາງຮອດທ້ອງຖິ່ນ, ເປັນສູນກາງໃນການຈັດຕັ້ງປະຕິບັດການເກັບກຳ, ການຜະລິດ, ການສະໜອງຂໍ້ມູນສະຖິຕິທາງການ ແລະການສ້າງຖານຂໍ້ມູນສະຖິຕິ ຕາມຫຼັກການວິທະຍາສາດສະຖິຕິ ຂອງ ສປປ ລາວ ແລະ ຕາມຫຼັກການພື້ນຖານຂອງວຽກງານສະຖິຕິ ທີ່ກຳນົດໄວ້ໃນມາດຕາ 5 ຂອງກົດໝາຍວ່າດ້ວຍ ສະຖິຕິ.

## ໝວດທີ II
## ໜ້າທີ່ ແລະຂອບເຂດສິດ

ມາດຕາ 3. ໜ້າທີ່ຂອງສູນສະຖິຕິແຫ່ງຊາດ

3.1 ຄົ້ນຄວ້າຫັນເອົາແນວທາງນະໂຍບາຍຂອງພັກ ແລະ ລັດຖະບານເປັນແຜນຍຸດທະສາດ, ແຜນງານ, ໂຄງການ ແລະລະບຽບກົດໝາຍກ່ຽວກັບການພັດທະນາລະບົບສະຖິຕິ ແຫ່ງຊາດ ເພື່ອສະເໜີລັດຖະບານພິຈາລະນາ;

3.2 ສ້າງ, ປັບປຸງກົດໝາຍ ແລະ ນິຕິກຳຕ່າງໆກ່ຽວກັບການຄຸ້ມຄອງສະຖິຕິ ໃຫ້ສອດຄ່ອງກັບສະພາບໃນແຕ່ລະໄລຍະ ເພື່ອສະເໜີລັດຖະບານພິຈາລະນາ;

3.3 ຊີ້ນຳ, ຕິດຕາມ ແລະ ກວດກາການຈັດຕັ້ງປະຕິບັດບັນດາແຜນຍຸດທະສາດ, ແຜນງານ, ໂຄງການ ແລະ ກົດໝາຍທີ່ໄດ້ຮັບອະນຸມັດ ໃຫ້ບັນລຸຜົນສຳເລັດຕາມວັດຖຸປະສົງ ແລະ ຄາດໝາຍທີ່ກຳນົດໄວ້;

3.4 ໂຄສະນາ, ເຜີຍແຜ່ນະໂຍບາຍ, ລະບຽບກົດໝາຍ, ແຜນຍຸດທະສາດ, ແຜນດຳເນີນງານ; ຈັດຕັ້ງປະຕິບັດວຽກງານການຜະລິດ, ການເຜີຍແຜ່ສະຖິຕິທາງການຂອງລະບົບການຈັດຕັ້ງສະຖິຕິແຫ່ງຊາດ;

3.5 ສ້າງຕາຕະລາງເກັບກຳ, ປຶ້ມຄູ່ມືການເກັບກຳ ແລະ ທວງເອົາຂໍ້ມູນສະຖິຕິ. ສັງລວມ, ປຸງແຕ່ງ, ວິໄຈ, ຈັດພິມ, ເຜີຍແຜ່ ຂໍ້ມູນສະຖິຕິທາງການ;

3.6 ວາງແຜນກໍ່ສ້າງ, ບຳລຸງ, ຍົກລະດັບຄວາມຮູ້ ຄວາມສາມາດກ່ຽວກັບວຽກງານສະຖິຕິ; ກຳນົດຕຳແໜ່ງງານ, ບັນຈຸ, ສັບຊ້ອນ, ຍົກຍ້າຍ, ສຶກສາອົບຮົມ ແລະ ປະຕິບັດນະໂຍບາຍຕໍ່ພະນັກງານໃນຂະແໜງການຂອງຕົນໃຫ້ຖືກຕ້ອງຕາມລະບຽບກົດໝາຍ;

3.7 ຄົ້ນຄວ້າ ແລະ ສະເໜີ ປັບປຸງກົງຈັກການຈັດຕັ້ງ, ບຸກຄະລາກອນສະຖິຕິ, ຄົ້ນຄວ້າສະເໜີປະຕິບັດນະໂຍບາຍ ຍ້ອງຍໍ ແລະ ລົງວິໄນ ຕໍ່ພະນັກງານສະຖິຕິ;

3.8 ຄົ້ນຄວ້າ ແລະ ສະເໜີ ປະຕິບັດນະໂຍບາຍ ຕໍ່ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຜົນງານໃນການສະໜອງຂໍ້ມູນ ແລະປະຕິບັດວິໄນ ຕໍ່ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ

ທີ່ບໍ່ປະຕິບັດຕາມລະບອບການລາຍງານ ແລະ ພັນທະໃນການລາຍງານສະຖິຕິ ເຊິ່ງໄດ້ກຳນົດໄວ້ໃນ ມາດຕາ 20, 22 ແລະ 23 ຂອງກົດໝາຍວ່າດ້ວຍສະຖິຕິ.

3.9 ສະຫຼຸບ, ລາຍງານຜົນຂອງການຈັດຕັ້ງປະຕິບັດວຽກງານສະຖິຕິໃຫ້ຂັ້ນເທິງຢ່າງເປັນປົກກະຕິ;

3.10 ປະຕິບັດໜ້າທີ່ອື່ນໆ ຕາມລະບຽບກົດໝາຍ ແລະ ການມອບໝາຍຂອງຂັ້ນເທິງ.

**ມາດຕາ 4. ຂອບເຂດສິດຂອງສູນສະຖິຕິແຫ່ງຊາດ**

4.1 ອອກຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ກ່ຽວກັບການເຄື່ອນໄຫວປະຕິບັດວຽກງານສະຖິຕິ;

4.2 ຊີ້ນຳ, ຄຸ້ມຄອງ ໃນການຈັດຕັ້ງປະຕິບັດວຽກງານການຜະລິດ, ການເຜີຍແຜ່ ສະຖິຕິທາງການຂອງລະບົບການຈັດຕັ້ງສະຖິຕິແຫ່ງຊາດ. ໃຫ້ຄຳປຶກສາທາງດ້ານຫຼັກວິທະຍາສາດສະຖິຕິແກ່ຫົວໜ່ວຍພື້ນຖານທີ່ມີການຜະລິດສະຖິຕິ;

4.3 ຄົ້ນຄວ້າ ແລະ ສະເໜີ ແຕ່ງຕັ້ງ, ຍົກຍ້າຍໜ້າທີ່ ຫຼື ປົດຕຳແໜ່ງ ຫົວໜ້າ ແລະ ຮອງຫົວໜ້າສູນສະຖິຕິປະຈຳແຂວງ, ນະຄອນ, ເມືອງ, ເທດສະບານ;

4.4 ເປັນໃຈກາງປະສານສົມທົບ ກັບຂະແໜງການຕ່າງໆ ແລະ ອົງການປົກຄອງທ້ອງຖິ່ນທຸກຂັ້ນ ໃນການຄຸ້ມຄອງ, ກວດກາ ແລະ ຈັດຕັ້ງປະຕິບັດວຽກງານສະຖິຕິ;

4.5 ຕິດຕາມ, ກວດກາ ແລະປະເມີນ ກ່ຽວກັບລະບອບວິທີວິທະຍາສະຖິຕິ ແລະການເຄື່ອນໄຫວວຽກງານສະຖິຕິ ຕາມແຜນຍຸດທະສາດ ແລະ ແຜນດຳເນີນງານ ຂອງລະບົບການຈັດຕັ້ງສະຖິຕິແຫ່ງຊາດ ໃນແຕ່ລະໄລຍະ;

4.6 ແຕ່ງຕັ້ງຄະນະຮັບຜິດຊອບໂຄງການ ເພື່ອການປະສານງານ ແລະ ຈັດຕັ້ງປະຕິບັດວຽກໂຄງການ ທີ່ກ່ຽວຂ້ອງກັບການພັດທະນາລະບົບສະຖິຕິແຫ່ງຊາດ;

4.7 ພົວພັນ, ຮ່ວມມືສາກົນກ່ຽວກັບວຽກງານສະຖິຕິຕາມພາລະບົດບາດ, ສິດ, ໜ້າທີ່ ແລະຕາມການມອບໝາຍ;

4.8 ຄົ້ນຄວ້າ ແລະສະເໜີ ບຳລຸງ, ກໍ່ສ້າງ, ສຶກສາອົບຮົມ ແລະ ຍົກລະດັບຄວາມຮູ້ ແລະຄວາມຊຳນານງານດ້ານສະຖິຕິ ໃຫ້ແກ່ລັດຖະກອນໃນລະບົບການຈັດຕັ້ງສະຖິຕິ ແຫ່ງຊາດດ້ວຍຫຼາຍຮູບແບບທັງພາຍໃນ ແລະ ຕ່າງປະເທດ;

4.9 ປະຕິບັດສິດອື່ນ ຕາມລະບຽບກົດໝາຍ ແລະ ການມອບໝາຍຂອງຂັ້ນເທິງ.

## ໝວດທີ III
## ໂຄງປະກອບການຈັດຕັ້ງ

**ມາດຕາ 5. ໂຄງປະກອບກົງຈັກ**

**5.1 ໂຄງປະກອບກົງຈັກຂອງສູນສະຖິຕິແຫ່ງຊາດປະກອບດ້ວຍ:**

1) ຫ້ອງການ.

2) ກົມສະຖິຕິເສດຖະກິດ;

3) ກົມສະຖິຕິສັງຄົມ;

4) ກົມບໍລິການສະຖິຕິ;

ຢູ່ພາຍໃນຫ້ອງການ ແລະ ບັນດາກົມ ອະນຸຍາດໃຫ້ມີພະແນກ, ໂຄງການ ແລະ ໜ່ວຍງານວິຊາການຈຳນວນໜຶ່ງໃນແຕ່ລະໄລຍະຕາມຄວາມເໝາະສົມ.

**5.2 ໂຄງປະກອບກົງຈັກຂອງສະຖິຕິຂັ້ນທ້ອງຖິ່ນ ປະກອບດ້ວຍ:**

- ສູນສະຖິຕິປະຈຳແຂວງ, ນະຄອນ
- ສູນສະຖິຕິປະຈຳເມືອງ, ເທດສະບານ
- ຈຸງານສະຖິຕິປະຈຳບ້ານ

ນອກຈາກນັ້ນ ຍັງມີຂະແໜງສະຖິຕິ ປະຈຳພະແນກການ ອ້ອມຂ້າງແຂວງ, ນະຄອນ, ໜ່ວຍງານສະຖິຕິປະຈຳຫ້ອງການຂະແໜງການອ້ອມຂ້າງເມືອງ, ເທດສະບານ, ຈຸງານຂອງທີວໜ່ວຍສະຖິຕິພື້ນຖານ, ເຊິ່ງແມ່ນການຈັດຕັ້ງສະຖິຕິລະບົບສາຍຂວາງ ທີ່ຂຶ້ນກັບບັນດາກະຊວງ ແລະ ອົງການທີ່ກ່ຽວຂ້ອງ.

## ມາດຕາ 6. ໂຄງປະກອບບຸກຄະລາກອນ

ໂຄງປະກອບບຸກຄະລາກອນຂອງສູນສະຖິຕິແຫ່ງຊາດປະກອບມີດັ່ງນີ້:

6.1 ສູນສະຖິຕິແຫ່ງຊາດມີຫົວໜ້າສູນ 1 ທ່ານ ເຊິ່ງມີຖານະເທົ່າກັບລັດຖະມົນຕີຊ່ວຍວ່າການ ໄດ້ຮັບການແຕ່ງຕັ້ງ ຫຼື ປົດຕຳແໜ່ງ ໂດຍນາຍົກລັດຖະມົນຕີ ຕາມການສະເໜີ ຂອງຄະນະຈັດຕັ້ງສູນກາງພັກ ດ້ວຍການເຫັນດີເປັນເອກະພາບ ຂອງລັດຖະມົນຕີວ່າການກະຊວງແຜນການ ແລະ ການລົງທຶນ;

6.2 ສູນສະຖິຕິແຫ່ງຊາດ ປະກອບມີຮອງຫົວໜ້າສູນຈຳນວນໜຶ່ງ, ຫົວໜ້າຫ້ອງການ, ຫົວໜ້າກົມ ເຊິ່ງໄດ້ຮັບການແຕ່ງຕັ້ງ ຫຼື ປົດຕຳແໜ່ງ ໂດຍນາຍົກລັດຖະມົນຕີ ຕາມການສະເໜີ ຂອງຄະນະຈັດຕັ້ງສູນກາງພັກ ບົນພື້ນຖານການເຫັນດີເປັນເອກະພາບກັບຫົວໜ້າສູນສະຖິຕິແຫ່ງຊາດ ແລະ ລັດຖະມົນຕີວ່າການ ກະຊວງແຜນການ ແລະ ການລົງທຶນ;

ຮອງຫົວໜ້າສູນສະຖິຕິແຫ່ງຊາດ ເປັນຜູ້ຊ່ວຍຫົວໜ້າສູນສະຖິຕິແຫ່ງຊາດ ລົງເລິກຮັບຜິດຊອບວຽກງານໃດໜຶ່ງຕາມການມອບໝາຍ ຂອງຫົວໜ້າສູນສະຖິຕິແຫ່ງຊາດ.

6.3 ສູນສະຖິຕິ ແຫ່ງຊາດ ປະກອບມີ ຮອງຫົວໜ້າຫ້ອງການ, ຮອງຫົວໜ້າກົມ; ຫົວໜ້າ, ຮອງຫົວໜ້າພະແນກ, ຊຶ່ງໄດ້ຮັບການແຕ່ງຕັ້ງ ຫຼື ປົດຕຳແໜ່ງໂດຍລັດຖະມົນຕີວ່າການກະຊວງແຜນການ ແລະ ການລົງທຶນ. ນອກນັ້ນ, ຍັງປະກອບມີພະນັກງານວິຊາການ ແລະ ພະນັກງານບໍລິຫານຮັບໃຊ້ຈຳນວນໜຶ່ງ ເພື່ອປະກອບເຂົ້າຕຳແໜ່ງງານຕ່າງໆຕາມຄວາມເໝາະສົມ.

# ໝວດທີ IV
# ລະບອບແບບແຜນວິທີເຮັດວຽກ

**ມາດຕາ 7. ຫຼັກການ ແລະ ວິທີການ**

ສູນສະຖິຕິແຫ່ງຊາດ ເຄື່ອນໄຫວ ແລະ ດຳເນີນງານຕາມຫຼັກການດັ່ງນີ້:

7.1 ການເຄື່ອນໄຫວ ແລະ ການດຳເນີນງານຂອງສູນສະຖິຕິແຫ່ງຊາດ ຕ້ອງຍຶດໝັ້ນຕາມແນວທາງນະໂຍບາຍຂອງພັກ, ລະບຽບກົດໝາຍຂອງລັດ;

7.2 ເຮັດວຽກຕາມຫຼັກການລວມສູນປະຊາທິປະໄຕ, ຕົກລົງເປັນໝູ່ຄະນະ, ແບ່ງງານໃຫ້ບຸກຄົນຮັບຜິດຊອບ ແລະ ປະຕິບັດລະບອບຫົວໜ້າດຽວ, ເສີມຂະຫຍາຍຢ່າງມີຫົວຄິດປະດິດສ້າງ, ການມອບສິດ ແລະ ຄວາມຮັບຜິດຊອບຕ້ອງມີລາຍລັກອັກສອນຢ່າງເປັນທາງການ;

7.3 ເຮັດວຽກຢ່າງມີແຜນການ, ແຜນງານ, ໂຄງການລະອຽດ ແລະ ມີກຳນົດເວລາ. ແກ້ໄຂວຽກງານຢ່າງມີຈຸດສຸມ, ມີການຈັດລຽງບຸລິມະສິດ ແລະ ມີເປົ້າໝາຍໃນແຕ່ລະໄລຍະ;

7.4 ປະສານສົມທົບກັບບັນດາຂະແໜງການຂັ້ນສູນກາງ ແລະ ອົງການປົກຄອງທ້ອງຖິ່ນ ເພື່ອຄວາມເປັນເອກະພາບໃນການເຄື່ອນໄຫວວຽກງານກ່ຽວກັບສະຖິຕິ;

7.5 ເຮັດວຽກມີການກວດກາ, ຕິດຕາມ, ຊຸກຍູ້, ສະຫຼຸບຖອດຖອນບົດຮຽນ, ຕີລາຄາຜົນໄດ້ຜົນເສຍ, ພ້ອມທັງປະຕິບັດລະບອບລາຍງານສ່ອງແສງຢ່າງເຂັ້ມງວດ; ປະຕິບັດລະບອບປະຊຸມປະຈຳສັບປະດາ, ກອງປະຊຸມສະຫຼຸບປະຈຳເດືອນ, 03 ເດືອນ, 06 ເດືອນ, ປະຈຳປີ ແລະ ກອງປະຊຸມວິສາມັນຕ່າງໆ ເພື່ອກຳສະພາບຮອບດ້ານ ຈາກແຕ່ລະພາກສ່ວນ ແລ້ວສັງລວມເຮັດເປັນສອງແບບຄື: ວຽກບໍລິຫານປົກກະຕິ ແມ່ນລາຍງານໃຫ້ ກະຊວງແຜນການ ແລະ ການລົງທຶນ, ສ່ວນວຽກວິຊາການສະຖິຕິ ແມ່ນລາຍງານໃຫ້ ກະຊວງແຜນການ ແລະ ການລົງທຶນ, ສຳນັກງານນາຍົກລັດຖະມົນຕີ ແລະ ພາກສ່ວນທີ່ກ່ຽວຂ້ອງ.

# ໝວດທີ V
# ບົດບັນຍັດສຸດທ້າຍ

**ມາດຕາ 8. ງົບປະມານ ແລະ ຕາປະທັບ**

ສູນສະຖິຕິ ແຫ່ງຊາດມີງົບປະມານ ແລະ ຕາປະທັບ ຂອງຕົນຕາມທີ່ໄດ້ກຳນົດໄວ້ໃນມາດຕາ 58 ແລະ ມາດຕາ 59 ຂອງກົດໝາຍວ່າດ້ວຍສະຖິຕິ ເພື່ອຮັບໃຊ້ໃນການເຄື່ອນໄຫວວຽກງານທາງລັດຖະການ.

**ມາດຕາ 9. ການຜັນຂະຫຍາຍ**

ມອບໃຫ້ກະຊວງແຜນການ ແລະ ການລົງທຶນ ຄຸ້ມຄອງ ແລະ ກວດກາວຽກງານສະຖິຕິຕາມທີ່ໄດ້ກຳນົດໄວ້ໃນພາກ VII, ໝວດທີ 1 ແລະ ໝວດທີ 2, ມາດຕາ 45 ແລະ ມາດຕາ 49 ຂອງກົດໝາຍວ່າດ້ວຍສະຖິຕິ.

ມອບໃຫ້ ຫົວໜ້າສູນສະຖິຕິ ແຫ່ງຊາດ ເປັນຜູ້ກຳນົດພາລະບົດບາດ, ໜ້າທີ່, ຂອບເຂດສິດ, ຕຳແໜ່ງ ແລະ ໂຄງປະກອບກົງຈັກຂອງບັນດາກົມ, ສູນສະຖິຕິ ປະຈຳແຂວງ, ນະຄອນ, ສູນສະຖິຕິປະຈຳເມືອງ, ເທດສະບານ ຕາມຄວາມເໝາະສົມ ແລະ ນຳສະເໜີລັດຖະມົນຕີວ່າການກະຊວງແຜນການ ແລະ ການລົງທຶນເປັນຜູ້ຕົກລົງ

ມອບໃຫ້ລັດຖະມົນຕີວ່າການບັນດາກະຊວງ, ອົງການ ເປັນຜູ້ກຳນົດພາລະບົດບາດ, ໜ້າທີ່, ຂອບເຂດສິດ, ຕຳແໜ່ງ ແລະ ໂຄງປະກອບກົງຈັກ ຂອງສູນສະຖິຕິປະຈຳກະຊວງ, ອົງການ, ຂະແໜງສະຖິຕິປະຈຳພະແນກການອ້ອມຂ້າງແຂວງ, ນະຄອນ, ໜ່ວຍງານສະຖິຕິປະຈຳຫ້ອງການຂະແໜງການອ້ອມຂ້າງເມືອງ, ເທດສະບານ ບົນພື້ນຖານຄວາມເປັນເອກະພາບກັບ ສູນສະຖິຕິ ແຫ່ງຊາດ ແລະ ກະຊວງແຜນການ ແລະ ການລົງທຶນ ຕາມຄວາມເໝາະສົມ.

**ມາດຕາ 10. ການຈັດຕັ້ງປະຕິບັດ**

ບັນດາກະຊວງ, ອົງການທຽບເທົ່າກະຊວງ, ສູນສະຖິຕິແຫ່ງຊາດ ແລະ ອົງການປົກຄອງທ້ອງຖິ່ນ ທຸກຂັ້ນ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດດຳລັດສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 11. ຜົນສັກສິດ**

ດຳລັດສະບັບນີ້ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ນາຍົກລັດຖະມົນຕີແຫ່ງ ສ ປ ປ ລາວ**

ທອງສິງ ທຳມະວົງ